ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

***************

ກະຊວງສາທາລະນະສຸກ

ກົມແຜນການ ແລະ ການຮ່ວມມື

ໂຄງການ ກັນ, ຄວບຄຸມ ແລະ ຕອບໂຕ້ການລະບາດຂອງພະຍາດ COVID-19 ຢູ່ ສປປ ລາວ

**(P173817)**

ຮ່າງແຜນການ

# ແຜນຄວາມຮັບຜິດຊອບດ້ານສິ່ງແວດລ້ອມ ແລະ ສັງຄົມ (ຜຮສສ)

02 ເມສາ 2020

## ແຜນຄວາມຮັບຜິດຊອບດ້ານສິ່ງແວດລ້ອມ ແລະ ສັງຄົມ

1. ສາທາລະນະລັດປະຊາທິປະໄຕປະຊາຊົນລາວ (ສປປ ລາວ) (ຕໍ່ໄປນີ້ຄືຜູ້ກູ້ຢືມ) ຜ່ານກະຊວງສາທາລະນະສຸກ ຈະດໍາເນີນການຈັດຕັ້ງປະຕິບັດ ໂຄງການ ກັນ, ຄວບຄຸມ ແລະ ຕອບໂຕ້ການລະບາດຂອງພະຍາດ COVID-19 ໃນປະເທດລາວ, ດ້ວຍການມີສ່ວນຮ່ວມຂອງ ພະແນກສາທາລະສຸກແຂວງ, ຫ້ອງການສາທາລະສຸກເມືອງ, ແລະ ບັນດາສຸກສາລາ. ອົງການພັດທະນາສາກົນ (ຕໍ່ໄປນີ້ຄືຜູ້ ໃຫ້ກູ້ຢືມ) ໄດ້ຕົກລົງສະໜອງທຶນໃຫ້ແກ່ໂຄງການ.

2. ຜູ້ກູ້ຢືມຈະປະຕິບັດຕາມມາດຕະການ ແລະ ການປະຕິບັດ ທີ່ສໍາຄັນ ເພື່ອໃຫ້ໂຄງການດໍາເນີນງານໄດ້ຕາມມາດຕະຖານສິ່ງແວດລ້ອມ ແລະສັງຄົມ (ມສສ). ແຜນຄວາມຮັບຜິດຊອບດ້ານສິ່ງແວດລ້ອມ ແລະ ສັງຄົມ (ຜຮສສ) ໄດ້ຕາມມາດຕະການ ແລະ ກິດຈະກໍາທີ່ສໍາຄັນ, ລວມມີ ເອກະສານສະເພາະ ແລະ ແຜນການຕ່າງໆ ພ້ອມດ້ວຍກໍານົດໄລຍະເວລາໃຫ້ກັບແຕ່ລະກິດຈະກາໄປພ້ອມເລີຍ.

3. ຜູ້ກູ້ຢືມແມ່ນມີໜ້າທີ່ຮັບຜິດຊອບ ໃນການປະຕິບັດຕາມຄວາມຕ້ອງການທັງໝົດຂອງ (ຜຮສສ) ທັງໃນເວລາໃນການດໍາເນີນງານມາດຕະການສະເພາະເຈາະຈົງ ແລະ ການປະຕິບັດກິດຈະກໍາ ໂດຍກະຊວງ, ໜ່ວຍງານ ຫຼື ຫົວໜ່ວຍຈັດຕັ້ງຕ່າງໆທີ່ໄດ້ກ່າວໄວ້ໃນຂໍ້ທີ 1 ຂ້າງເທິງນັ້ນ.

4. ການດໍາເນີນງານຂອງມາດຕະການ ແລະ ການປະຕິບັດທີ່ສໍາຄັນ ກໍານົດໄວ້ໃນ (ຜຮສສ) ນີ້ ແມ່ນຈະໄດ້ຮັບການຕິດຕາມ ແລະ ລາຍງານໃຫ້ແກ່ສະມາຄົມ (ທະນາຄານໂລກ) ໂດຍຜູ້ກູ້ຢືມ ດັ່ງທີ່ໄດ້ຮຽກຮ້ອງໂດຍ (ຜຮສສ) ຂອງ ບັນດາມາດຕະການ ແລະ ເງື່ອນໄຂການເຫັນດີທາງດ້ານກົດໝາຍ ແລະ ສະມາຄົມຈະໄດ້ຕິດຕາມ ແລະ ປະເມີນຄວາມຄືບໜ້າ ແລະ ຜົນສໍາເລັດຂອງການນໍາໃຊ້ເຄື່ອງມືປະເມີນ ແລະ ການຈັດຕັ້ງປະຕິບັດຕະຫຼອດການດໍາເນີນງານໂຄງການ.

5. ດັ່ງທີ່ໄດ້ຕົກລົງກັນໂດຍ ສະມາຄົມ (ທະນາຄານໂລກ) ແລະ ຜູ້ກູ້ຢືມ, ຜຮສສ ນີ້ແມ່ນຈະໄດ້ຖືກປັບປຸງແກ້ໄຂເປັນຄັ້ງຄາວໄປໃນໄລຍະເວລາຂອງດໍາເນີນໂຄງການ, ເພື່ອສະແດງໃຫ້ເຫັນການຈັດການທີ່ປັບຕົວໄດ້ຂອງບັນດາຂໍ້ປ່ຽນແປງ ແລະ ສະພາບການທີ່ບໍ່ສາມາດເບິ່ງເຫັນໄດ້ຂອງໂຄງການ ຫຼື ເພື່ອຕອບສະໜອງຕໍ່ກັບ ການປະເມີນຜົນ ແລະ ປະສິດທິພາບຂອງໂຄງການ ທີ່ໄດ້ຮັບການຈັດຕັ້ງປະຕິບັດ ໂດຍອີງໃສ່ ຜຮສສ . ໃນສະພາບການດັ່ງກ່າວ, ຜູ້ກູ້ຢືມຈະທໍາການຕົກລົງຕໍ່ກັບ ສະມາຄົມ ແລະ ຈະປັບປຸງ ຜຮສສ ເພື່ອໃຫ້ສະທ້ອນເຖິງການປ່ຽນແປງດັ່ງກ່າວ. ຂໍ້ຕົກລົງຕໍ່ກັບການປ່ຽນແປງໃນ ຜຮສສ ຈະຖືກບັນທຶກຜ່ານການແລກປ່ຽນຈົດໝາຍທີ່ມີລາຍເຊັນ ລະຫວ່າງສະມາຄົມ ແລະ ຜູ້ກູ້ຢືມ. ຜູ້ກູ້ຢືມຈະລົງເຜີຍແຜ່ການປັບປຸງຂອງ ຜຮສສ ທັນທີ.

6. ໃນກໍລະນີທີ່ບັນດາຂໍ້ແກ້ໄຂ, ສະພາບການທີ່ເບິ່ງບໍ່ເຫັນນັ້ນ, ຫຼື ການປະຕິບັດໂຄງການສົ່ງຜົນໃຫ້ມີການປ່ຽນແປງຕໍ່ກັບ ຄວາມສ່ຽງ ແລະ ຜົນກະທົບ ໃນລະຫວ່າງ ການດໍາເນີນໂຄງການ, ກະຊວງສາທາລະນະສຸກຈະສະໜອງເງິນທຶນເພີ່ມເຕີມ, ຖ້າຈໍາເປັນ, ໃຫ້ແກ່ການດໍາເນີນງານ ມາດຕະການ ແລະ ການປະຕິບັດຕ່າງໆ ເພື່ອແກ້ໄຂບັນດາຄວາມສ່ຽງ ແລະ ຜົນກະທົບດັ່ງກ່າວນັ້ນ.

| ມາດຕະການ ແລະ ການປະຕິບັດທີ່ສຳຄັນ | | ຂອບເຂດໄລຍະເວລາ | ນິຕິບຸກຄົນ / ເຈົ້າໜ້າທີ່ຮັບຜິດຊອບ |
|---|---|---|---|
| **ການເຝົ້າຕິດຕາມ ແລະ ການລາຍງານ** | | | |
| A | ການລາຍງານເປັນປະຈຳ: ກະກຽມ ແລະ ສົ່ງ ໃຫ້ກັບສະມາຄົມ ເປັນປະຈຳກ່ຽວກັບບັນດາ ບົດລາຍງານຕິດຕາມຂອງການປະຕິບັດງານທາງສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ (ESHS) ຂອງໂຄງການ, ລວມເຖິງແຕ່ບໍ່ຈຳກັດ, ບັນດາກິດຈະກຳການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ການຮ້ອງທຸກ. | ປະຈຳໄຕມາດ, ທຸກໆຫົກເດືອນ, ປະຈຳປີ ຕະຫຼອດການດຳເນີນໂຄງການ. | ກະຊວງສາທາລະນະສຸກ-ກົມແຜນການ ແລະ ການຮ່ວມມື |
| **ມສສ 1: ການປະເມີນຜົນ ແລະ ການຈັດການ ຂອງບັນດາຄວາມສ່ຽງ ແລະ ຜົນກະທົບຂອງສິ່ງແວດລ້ອມ ແລະ ສັງຄົມ** | | | |
| 1.1 | ໂຄງຮ່າງການຈັດຕັ້ງຂອງອົງກອນ: ກົມແຜນການ ແລະ ການຮ່ວມມື ກະຊວງສາທາລະນະສຸກ ຈະເປັນຫ້ອງການປະສານງານໂຄງການ ເພື່ອຄຸ້ມຄອງ ແລະ ການປະສານງານຂອງໂຄງການ ແລະ ຈັດຫາພະນັກງານທີ່ມີຄຸນສົມບັດ, ເຊິ່ງລວມມີ ພະນັກງານດ້ານສິ່ງແວດລ້ອມ ແລະ ສັງຄົມ, ຜູ້ຊ່ຽວຊານດ້ານການຈັດການຂີ້ເຫຍື້ອຂອງໂຮງໝໍ ແລະ ບັນດາຊັບພະຍາກອນຕ່າງໆ ເພື່ອສະໜັບສະໜູນການຄຸ້ມຄອງຈັດການຄວາມສ່ຽງ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ ຂອງໂຄງການ. | ພະນັກງານດ້ານສິ່ງແວດລ້ອມ (1 ESHS) ແລະ ສັງຄົມ (1) ໄດ້ຮັບການແຕ່ງຕັ້ງກ່ອນການປະຕິບັດກິຈະກຳຕ່າງໆຂອງໂຄງການພ້ອມກັບຄວາມສ່ຽງ ແລະ ຜົນກະທົບທີ່ເປັນໄປໄດ້ຂອງແຜນການ ESHS. ການແຕ່ງຕັ້ງພະນັກງານດ້ານສິ່ງແວດລ້ອມ ແລະ ສັງຄົມຈະຖືກຮັກສາໄວ້ສຳລັບການດຳເນີນງານເຄື່ອງມື ແນະນຳເຄື່ອງມື ກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ກຄສສ) ຕະຫຼອດໄລຍະເວລາການດຳເນີນການໂຄງການ. | ກະຊວງສາທາລະນະສຸກ-ກົມແຜນການ ແລະ ການຮ່ວມມື |

| ມາດຕະການ ແລະ ການປະຕິບັດທີ່ສຳຄັນ | | ຂອບເຂດໄລຍະເວລາ | ນິຕິບຸກຄົນ / ເຈົ້າໜ້າທີ່ຮັບຜິດຊອບ |
|---|---|---|---|
| 1.2 | **ແຜນການປະເມີນຜົນ/ການຄຸ້ມຄອງ ທາງສິ່ງແວດລ້ອມ ແລະ ສັງຄົມ ແລະ ເຄື່ອງມື/ຜູ້ເຮັດສັນຍາ**<br>ກ. ປະເມີນຜົນຄວາມສ່ຽງ ແລະ ຜົນກະທົບທາງສິ່ງແວດລ້ອມ ແລະ ສັງຄົມຂອງກິດຈະກຳໂຄງການທີ່ໄດ້ສະເໜີ, ໂດຍອີງຕາມ ກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ກຄສສ) ໃນການກະກຽມ, ເຜີຍແຜ່ ແລະ ຮັບຮອງເອົາ ໃຫ້ກັບໂຄງການ, ເຊິ່ງປະກອບມີການຮັບປະກັນວ່າ ບຸກຄົນຕ່າງໆ ແລະ ບັນດາກຸ່ມຜູ້ທີ່ດ້ອຍໂອກາດ ແລະ ອ່ອນແອ ອາດຈະດ້ອຍສະພາບການສະເພາະໃດໜຶ່ງ, ສາມາດເຂົ້າເຖິງຜົນປະໂຫຍດພັດທະນາ ທີ່ເປັນຜົນມາຈາກໂຄງການ.<br><br>ຂ. ກະກຽມ, ເຜີຍແຜ່, ຮັບຮອງເອົາ ແລະ ດຳເນີນງານ ທຸກໆແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຫຼື ເຄື່ອງມືອື່ນໆ ທີ່ຈຳເປັນ ໃຫ້ແກ່ກິດຈະກຳໂຄງການຕາມລຳດັບ ໂດຍອີງຕາມຂະບວນການປະເມີນຜົນທີ່ສອດຄອງກັບມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມ (ມີກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ກຄສສ), ສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ (ESHS), ແລະ ວິທີການປະຕິບັດທີ່ດີໃນດ້ານອຸສະຫະກຳໃນລະດັບສາກົນ (GIIP) ອື່ນໆທີ່ກ່ຽວຂ້ອງ ເຊິ່ງລວມມີ ແນວທາງຂອງອົງການອະນາໄມໂລກ ກ່ຽວກັບ ການຕອບໂຕ້ຕໍ່ການລະບາດຂອງ ໂຄວິດ-19 ໃນລັກສະນະ ທີ່ສາມາດຍອມຮັບໄດ້ຕໍ່ກັບສະມາຄົມ.<br><br>ຄ. ລວມເອົາລັກສະນະທີ່ກ່ຽວຂ້ອງຂອງແຜນຄວາມຮັບຜິດຊອບດ້ານສິ່ງແວດລ້ອມ ແລະ ສັງຄົມ (ຜຮສສ) ເຊິ່ງປະກອບມີ ໃນຈຳນວນນັ້ນມີ ແຜນການສິ່ງແວດລ້ອມ ແລະ ສັງຄົມ ຫຼື ເຄື່ອງມືອື່ນໆ, ຂໍ້ກຳນົດໃນ ມສສ 2 ແລະ ມາດຕະການອື່ນໆທີ່ຈຳເປັນໃດໜຶ່ງ, ເຂົ້າໃນ ຂໍ້ກຳນົດຂອງ ສິ່ງແວດລ້ອມ , ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ (ESHS) ຂອງເອກະສານຈັດຫາ ແລະ ສັນຍາ ກັບຜູ້ເຮັດສັນຍາ ແລະ ບໍລິສັດກຳກັບດູແລ. ຫຼັງຈາກນັ້ນ ຮັບປະກັນວ່າຜູ້ເຮັດສັນຍາ ແລະ ບໍລິສັດກັບກາດູແລນັ້ນ ປະຕິບັດຕາມຂໍ້ກຳນົດ ຂອງສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ (ESHS) ຂອງສັນຍາທີ່ກ່ຽວຂ້ອງ. | ກ. ກອບການຄຸ້ມຄອງສິ່ງແວດລ້ອມແລະສັງຄົມ (ກຄສສ) ແມ່ນໃຫ້ກະກຽມພາຍໃນ 30ວັນຫຼັງຈາກວັນທີກຳນົດໃຊ້ ແລະ ກ່ອນການປະຕິບັດກິດຈະກຳໃດໜຶ່ງ, ແລະ ການດຳເນີນການປະເມີນຜົນແມ່ນກ່ອນການປະຕິບັດບັນດາກິດຈະກຳທີ່ກ່ຽວຂ້ອງໂຄງການ.<br><br>ຂ. ກ່ອນການປະຕິບັດບັນດາກິດຈະກຳທີ່ກ່ຽວຂ້ອງໂຄງການ, ແລະ ຫຼັງຈາກ ຕະຫຼອດການປະຕິບັດກິດຈະກຳດັ່ງກ່າວ.<br><br>ຄ. ກ່ອນການເປີດຕົວຂະບວນການຈັດຊື້ ໃຫ້ກັບກິດຈະກຳໂຄງການທີ່ກ່ຽວຂ້ອງ, ແລະ ຫຼັງຈາກຕະຫຼອດການປະຕິບັດກິຈະກຳດັ່ງກ່າວ. | |

| ມາດຕະການ ແລະ ການປະຕິບັດທີ່ສຳຄັນ | | ຂອບເຂດໄລຍະເວລາ | ນິຕິບຸກຄົນ / ເຈົ້າໜ້າທີ່ຮັບຜິດຊອບ |
|---|---|---|---|
| 1.3 | ຂໍ້ຈຳກັດ: ຍົກເວັ້ນປະເພດກິດຈະກຳເຫຼົ່ານີ້ທີ່ບໍ່ມີສິດນຳໃຊ້ທຶນພາຍໃຕ້ໂຄງການ:<br>• ໂຄງສ້າງເຊັ່ນ: ຕຶກອາຄານຕ່າງໆໃໝ່, ເພື່ອຫຼີກລ້ຽງການຄອບຄອງທີ່ດິນ ແລະ ການຍ້າຍຖິ່ນຖານຕົວຈິງ ແລະ/ຫຼືເສດຖະກິດ ແລະຜົນກະທົບອື່ນໆທີ່ອາດຈະເກີດຂຶ້ນຕໍ່ກັບສິ່ງແວດລ້ອມໃນທ້ອງຖິ່ນຈາກການປຸກສ້າງ.<br>• ກິດຈະກຳຕ່າງໆທີ່ມີຄວາມເປັນໄດ້ສູງທີ່ຈະສົ່ງຜົນກະທົບດ້ານລົບໃຫ້ກັບສຸຂະພາບຂອງຄົນ ແລະ/ຫຼື ຕໍ່ກັບສິ່ງແວດລ້ອມທີ່ບໍ່ໄດ້ກ່ຽວຂ້ອງກັບການຮັກສາພະຍາດ ໂຄວິດ-19.<br>• ກິດຈະກຳໃດໜຶ່ງທີ່ຕ້ອງການໃຫ້ມີການເຫັນດີ ເຫັນພ້ອມຢ່າງເປັນອິດສະຫຼະໂດຍໄດ້ຮັບຂໍ້ມູນລ່ວງໜ້າ, ລົງເຜີຍແຜ່ ແລະ ພຽງພໍ ພາຍໃຕ້ ມສສ 7.<br><br>ຂໍ້ຍົກເວັ້ນອື່ນໆແມ່ນຈະກຳນົດໃນ ແຜນການ ໂຄງການ. | ໃນລະຫວ່າງຂະບວນການປະເມີນຜົນທີ່ປະຕິບັດພາຍໃຕ້ການປະຕິບັດ 1.2.ກ ຂ້າງເທິງ. | ກະຊວງສາທາລະນະສຸກ-ກົມແຜນການ ແລະການຮ່ວມມື |
| **ມສສ 2: ເງື່ອນໄຂ ແຮງງານແລະການເຮັດວຽກ** | | | |
| 2.1 | ການຈັດການແຮງງານ: ໂຄງການແມ່ນຈະປະຕິບັດໂດຍສອດຄອງກັບຂໍ້ກຳນົດໃຊ້ຂອງ ມສສ 2, ໃນລັກສະນະທີ່ຍອມຮັບໄດ້ຕໍ່ກັບສະມາຄົມ, ເຊິ່ງປະກອບມີ ໃນຈຳນວນນັ້ນແມ່ນ, ການດຳເນີນມາດຕະການວຽກງານສາທາລະນະສຸກ ແລະ ຄວາມປອດໄພທີ່ພຽງພໍ (ປະກອບມີການກຽມພ້ອມສຳລັບເຫດສຸກເສີນ ແລະ ມາດຕະການຕອບສະໜອງ), ກຳນົດການຄຸ້ມຄອງການຮ້ອງທຸກໃຫ້ກັບຜູ້ອອກແຮງງານໃນໂຄງການ, ແລະ ການລວມເອົາຂໍ້ກຳນົດແຮງງານເຂົ້າໃສ່ໃນ ຂໍ້ກຳນົດຂອງສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ (ESHS) ຂອງເອກະສານຈັດຊື້ ແລະ ການເຮັດສັນຍາ ກັບຜູ້ເຮັດສັນຍາ ແລະ ບໍລິສັດຄຸ້ມຄອງດູແລ. ໃນຖານະທີ່ເປັນສ່ວນໜຶ່ງຂອງ ກຄສສ, ຈະມີການກະກຽມ ຂະບວນການຈັດການແຮງງານ (LMP) ແລະ ດຳເນີນງານໂດຍສອດຄອງກັບຂໍ້ກຳນົດໃຊ້ຂອງ ມສສ 2, ໃນລັກສະນະທີ່ຍອມຮັບໄດ້ຕໍ່ກັບສະມາຄົມ. | ກະກຽມ ຂະບວນການຈັດການແຮງງານ (LMP) ໃຫ້ເປັນສ່ວນໜຶ່ງຂອງ ກຄສສ ພາຍໃນ 30 ວັນ ນັບແຕ່ໂຄງການມີຜົນສັກສິດ ແລະ ກ່ອນທີ່ຈະໃຫ້ພະນັກງານໂຄງການເຂົ້າມີສ່ວນຮ່ວມໃນການດຳເນີນກິຈະກຳຕ່າງໆ.<br><br>ມາດຕະການອື່ນໆທຸກໆມາດຕະການທີ່ເວົ້າສະເພາະໃນ 2.1 ນີ້ແມ່ນໃກ້ດຳເນີນການຕະຫຼອດການດຳເນີນໂຄງການ. | ກະຊວງສາທາລະນະສຸກ-ກົມແຜນການ ແລະ ການຮ່ວມມື |
| **ມສສ 3: ປະສິດທິພາບຂອງຊັບພະຍາກອນ ແລະ ການປ້ອງກັນມົນລະພິດ ແລະ ການຄຸ້ມຄອງ** | | | |
| | ໄດ້ມີການພິຈາລະນາ ຫຼັກເກນທີ່ກ່ຽວຂ້ອງຂອງມາດຕະຖານນີ້ ຕາມຄວາມຈຳເປັນ ພາຍໃຕ້ການປະຕິບັດ 1.2 ຂ້າງເທິງ ເຊິ່ງປະກອບມີ ສົມມະນາມພາຍໃນ, ມາດຕະການໃນການຄວບຄຸມຂີ້ເຫຍື້ອຈາກໂຮງໝໍ ແລະ ປະເພດຂີ້ເຫຍື້ອທີ່ເປັນອັນຕະລາຍ ແລະ ບໍ່ເປັນອັນຕະລາຍອື່ນໆ. | | |
| **ມສສ 4: ສຸຂະພາບ ແລະຄວາມປອດໄພຂອງຊຸມຊົນ** | | | |

| ມາດຕະການ ແລະ ການປະຕິບັດທີ່ສຳຄັນ | | ຂອບເຂດໄລຍະເວລາ | ນິຕິບຸກຄົນ / ເຈົ້າໜ້າທີ່ຮັບຜິດຊອບ |
|---|---|---|---|
| | ໄດ້ມີການພິຈາລະນາ ຫຼັກເກນທີ່ກ່ຽວຂ້ອງຂອງມາດຕະຖານນີ້ ຕາມຄວາມຈຳເປັນ ພາຍໃຕ້ໜ້າວຽກ 1.2 ຂ້າງເທິງ ເຊິ່ງປະກອບມີ ສິ່ມມະນາມພາຍໃນ, ມາດຕະການໃນການ: ຫຼຸດຜ່ອນຄວາມສ່ຽງຂອງຊຸມຊົນຕໍ່ກັບພະຍາດຕິດຕໍ່; ຮັບປະກັນວ່າບັນດາບຸກຄົນ ຫຼື ກຸ່ມຄົນ ຜູ້ທີ່ອາດຈະດ້ອຍໂອກາດ ຫຼື ອ່ອນແອ, ຍ້ອນສະພາບການສະເພາະໃດໜຶ່ງ, ນັ້ນສາມາດເຂົ້າເຖິງຜົນປະໂຫຍດທີ່ເກີດຈາກໂຄງການໄດ້; ຄວບຄຸມຄວາມສ່ຽງຂອງການນຳໃຊ້ ບຸກຄະລາກອນຮັກສາຄວາມປອດໄພ; ຈັດການກັບຄວາມສ່ຽງຂອງການເກີດມີການໄຫຼເຂົ້າຂອງແຮງງານ; ແລະ ປ້ອງກັນ ແລະ ຕອບສະໜອງຕໍ່ກັບ ການທຳຮ້າຍ ແລະການລະເມີດທາງເພດ ແລະ ການທາລຸນທາງເພດ. | | |
| **ມສສ 5: ການຊື້ທີ່ດິນ, ຂໍ້ຈຳກັດຂອງການນຳໃຊ້ທີ່ດິນ ແລະ ການຈັດສັນຍົກຍ້າຍແບບບໍ່ສະໝັກໃຈ** | | | |
| | ບໍ່ກ່ຽວຂ້ອງ | | |
| **ມສສ 6: ການອານຸລັກຊັບພະຍາກອນຊີວະນາໆພັນ ແລະການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ມີຊີວິດແບບຍືນຍົງ** | | | |
| | ໄດ້ມີການພິຈາລະນາ, ຫຼັກເກນທີ່ກ່ຽວຂ້ອງຂອງມາດຕະຖານນີ້ ຕາມຄວາມຈຳເປັນ ພາຍໃຕ້ໜ້າວຽກ 1.2 ຂ້າງເທິງ | | |
| **ມສສ 7: ຊົນເຜົ່າພື້ນເມືອງ/ຊຸມຊົນທ້ອງຖິ່ນດັ້ງເດີມທີ່ບໍ່ໄດ້ຮັບການດູແລໃນປະຫັວດສາດທີ່ຜ່ານມາຢູ່ເຂດລຸ່ມຊາຮາຮາຂອງທະວີບອາຟຣິກາ** | | | |
| | ໄດ້ມີການພິຈາລະນາ, ຫຼັກເກນທີ່ກ່ຽວຂ້ອງຂອງມາດຕະຖານນີ້ ຕາມຄວາມຈຳເປັນ ພາຍໃຕ້ໜ້າວຽກ 1.2 ຂ້າງເທິງ | | |
| **ມສສ 8: ວັດທະນາທຳປະເພນີ** | | | |
| | ໄດ້ມີການພິຈາລະນາ, ຫຼັກເກນທີ່ກ່ຽວຂ້ອງຂອງມາດຕະຖານນີ້ ຕາມຄວາມຈຳເປັນ ພາຍໃຕ້ໜ້າວຽກ 1.2 ຂ້າງເທິງ. ຂັ້ນຕອນໃນໂອກາດຄົ້ນພົບ ແມ່ນຈະໄດ້ຖືກກະກຽມ ແລະ ຈັດໃຫ້ເປັນສ່ວນໜຶ່ງຂອງ ກຄສສ ແລະ ນຳໃຊ້ຕາມຄວາມຈຳເປັນ. | | |
| **ມສສ 9: ກອງທຶນການເງິນ** | | | |
| | ບໍ່ກ່ຽວຂ້ອງ. | | |
| **ມສສ 10: ການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ການລົງເຜີຍແຜ່ຂໍ້ມູນ** | | | |
| 10.1 | **ແຜນການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນກ່ຽວຂ້ອງ:** ໃຫ້ກະກຽມ, ລົງເຜີຍແຜ່, ນຳໃຊ້ ແລະ ດຳເນີນການ ແຜນການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນກ່ຽວຂ້ອງ (ຜສຜສ) ທີ່ສອດຄ່ອງກັບ ມສສ 10, ໃນລັກສະນະທີ່ຍອມຮັບໄດ້ຕໍ່ກັບສະມາຄົມ. | ແຜນຮ່າງ ຜສຜສ ແມ່ນໄດ້ມີການກະກຽມ ແລະ ລົງເຜີຍແຜ່ແລ້ວ ແລະຈະໄດ້ຮັບການປັບປຸງໃນໄລຍະເວລາບໍ່ເກີນ 30 ວັນ ຫຼັງຈາກມື້ປະກາດຜົນສັກສິດ. ຜສຜສ ຈະຖືກດຳເນີນການຕະຫຼອດໄລຍະການດຳເນີນໂຄງການ. | ກະຊວງສາທາລະນະສຸກ-ກົມແຜນການ ແລະ ການຮ່ວມມື |
| 10.2 | **ກົນໄກຂອງການຮ້ອງທຸກ:** ທຳການຈັດໃຫ້ມີການຮ້ອງທຸກທີ່ສາມາດເຂົ້າເຖິງໄດ້ຕໍ່ສາທາລະນະຊົນ ເພື່ອຮັບຄຳຮ້ອງ ແລະ ໃຫ້ຄວາມຊ່ວຍເຫຼືອໄຂຂໍ້ຂ້ອງໃຈ ແລະ ການຮ້ອງທຸກໃດໆທີ່ກ່ຽວຂ້ອງກັບໂຄງການ , ທີ່ສອດຄ່ອງກັບ ມສສ 10 ໃນລັກສະນະທີ່ຍອມຮັບໄດ້ຕໍ່ກັບສະມາຄົມ. | ຕະຫຼອດໄລຍະການດຳເນີນໂຄງການ. | ກະຊວງສາທາລະນະສຸກ-ກົມແຜນການ ແລະ ການຮ່ວມມື |

| ມາດຕະການ ແລະ ການປະຕິບັດທີ່ສຳຄັນ | | ຂອບເຂດໄລຍະເວລາ | ນິຕິບຸກຄົນ / ເຈົ້າໜ້າທີ່ຮັບຜິດຊອບ |
|---|---|---|---|
| **ການສະໜັບສະໜູນຄວາມສາມາດເຮັດວຽກ (ການຝຶກອົບຮົມ)** | | | |
| | ຈະໄດ້ທຳການປະເມີນຜົນຄວາມສາມາດ ເຊິ່ງຈະໄດ້ແຈ້ງໃຫ້ຮູ້ເຖິງ ການພັດທະນາການຝຶກອົບຮົມ ສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ (ESHS) ແລະ ແຜນການສ້າງຄວາມສາມາດ ໃຫ້ກັບບຸກຄະລາກອນທີ່ຈະມີສ່ວນຮ່ວມໃນການດຳເນີນໂຄງການ, ເຊິ່ງປະກອບມີແຕ່ມີຈຳກັດດັ່ງຕໍ່ໄປນີ້:<br>• ການຝຶກອົບຮົມກ່ຽວກັບ ການຄວບຄຸມ ແລະ ການກຳຈັດຂີ້ເຫຍື້ອຈາກການປິ່ນປົວ, ໂດຍເນັ້ນໜັກ ບັນດາຂີ້ເຫຍື້ອທີ່ເປັນອັນຕະລາຍ ແລະ ຕິດເຊື້ອໄດ້ ເຊິ່ງຈະມີການຝຶກອົບຮົມໃຫ້ກັບພະນັກງານປິ່ນປົວພະຍາດໃນທຸກໆລະດັບ.<br>• ການຝຶກອົບຮົມກ່ຽວກັບການຄວບຄຸມ ແລະ ການກຳຈັດຂີ້ເຫຍື້ອທີ່ຕິດເຊື້ອ ໃຫ້ແກ່ ອາສາສະໝັກ, ຜູ້ຝຶກງານ ແລະ ຜູ້ທີ່ເຮັດວຽກຊ່ວຍເຫຼືອສັງຄົມ ທຸກໆຄົນທີ່ມີສ່ວນຮ່ວມໃນໂຄງການ.<br>• ການພັດທະນາ, ການຜະລິດ ແລະ ການແຈກຢາຍຂອງຂໍ້ມູນ, ສື່ສຸຂະສຶກສາ (IEC) ກ່ຽວກັບການຄວບຄຸມ ແລະ ການກຳຈັດຂີ້ເຫຍື້ອຕິດເຊື້ອ. | ຕະຫຼອດໄລຍະການດຳເນີນໂຄງການ. | ກະຊວງສາທາລະນະສຸກ-ກົມແຜນການ ແລະ ການຮ່ວມມື |